# ບົດທີ 21

# ອາຈານໂປໂລໄປເມືອງອັນຕີໂອເຂຍ

**1** ເຮົາຮຽນຮູ້ມາແລ້ວເລື່ອງການປົກຄອງໃນຈັກກະພັດໂລມທີ່ແບ່ງເປັນແຂວງຕາມລະບົບປົກຄອງໂລມ. ມີຄຼິດສະຕະ ຈັກທີ່ຈັດຕັ້ງໄວ້ໃນເມືອງກາຍຊາເລຍ ຊຶ່ງເປັນເມືອງຫຼວງຂອງແຂວງລະບົບໂລມແຂວງໜຶ່ງ. ຕໍ່ນີ້ໄປເຮົາຈະຮຽນເລື່ອງ ການຕັ້ງຄຼິດສະຕະຈັກໄວ້ໃນແຂວງຂອງຈັກກະພັດໂລມອີກແຂວງໜຶ່ງທີ່ໃຫຍ່ຫຼາຍຄື ແຂວງຊີເລຍ. ເມືອງຫຼວງຂອງແຂວງ ຊີເລຍ ທີ່ຕັ້ງຄຼິດສະຕະຈັກ ໃໝ່ ຄືເມືອງໃດ? (ກຈກ 13:1) ____________________




**2** ສູນກາງຂອງການປົກຄອງຈັກກະພັດໂລມ ຂຶ້ນຢູ່ກັບແຂວງຕາມລະບົບໂລມຄື ໃນອັນຕີໂອເຂຍ ແຕ່ການປົກຄອງ ແພ່ງຂອງປະເທດຊີເລຍຍັງຢູ່ໃນເມືອງດາມາເຊ. ຈັກກະພັດໂລມປົກຄອງຊີເລຍຈາກສູນກາງຂອງກອງທັບໂລມໃນເມືອງດ? ______________________________

**3** ເມືອງອັນຕີໂອເຂຍຢູ່ເໜືອຈາກກຸງເຢລູຊາເລັມປະມານ 500 ຫຼັກກິໂລແມດ. ສະແດງວ່າຄຼິດສະຕະຈັກແຜ່ອອກ ໄປຢ່າງກວ້າງຂວາງ. ໃຫ້ທ່ານເບິ່ງແຜນທີ່ຂ້າງເທິງນີ້ແລ້ວຂຽນຊື່ເມືອງທີ່ມີຜູ້ຮັບເຊື່ອໃນພະເຢຊູ.

ກ. ໃນປາແລັດສະຕິນ ______________________________________________

______________________________________________________________

______________________________________________________________

ຂ. ນອກຈາກປາແລັດສະຕິນ ________________________________________

______________________________________________________________

______________________________________________________________

______________________________________________________________

**4** ໃຫ້ເບິ່ງແຜນທີ່ອີກຕໍ່ໄປແລ້ວຕອບດັ່ງຕໍ່ໄປນີ້:

ກ. ເມືອງໃດເປັນເມືອງຫຼວງຂອງແຂວງຢູດາຕາມລະບົບໂລມ? ____________________

ຂ. ເມືອງໃດທີ່ເປໂຕພົບການນິມິດໃຫ້ໄປຫາໂກເນລີໂອໃນກາຍຊາເລຍ? ____________

ຄ. ສອງເມືອງໃດໃນຟອຍນິເກທີ່ພະເຢຊູຫຼີກບໍ່ໄປ ໃນເທື່ອທີສອງພະອົງໄປຄາລີເລ ຍຸກສຸດທ້າຍໃນປີທີ່ສຳເລັດ? ______________________ ແລະ ____________________

ງ. ໄທເອທີໂອເປຍໄປເຖິງໃສເມື່ອຈະກັບມາຈາກເຢລູຊາເລັມ? ____________________

ຈ. ທ່ານໂປໂລຈະໄປໃສໃນ ກຈກ 9:30? ______________________________

ສ. ເມືອງໃດເປັນເມືອງຫຼວງຂອງຊີເລຍຕາມລະບົບໂລມ? ______________________

**5** ແຂວງຊີເລຍຕາມລະບົບໂລມໃຫຍ່ກວ່າແຂວງຢູດາລະບົບໂລມ. ເຊັ່ນດຽວກັນ ເມືອງຫຼວງຂອງ ແຂວງຊີເລຍໃຫຍ່ກວ່າ ເມືອງຫຼວງຂອງແຂວງຢູດາ. ດັ່ງນັ້ນ ເມືອງໃດໃຫຍ່ກວ່າກັນ ກາຍຊາ ເລຍ ຫຼືອັນຕີໂອເຂຍ? ______________________________________________

**6** ອັນຕີໂອເຂຍໃຫຍ່ແລະສຳຄັນກວ່າກາຍຊາເລຍ ເພາະເປັນສູນກາງປົກຄອງແຂວງທີ່ ໃຫຍ່ຫຼວງ. ໃນຈັກກະພັດໂລມ ກຸງ ໂລມໃຫຍ່ທີ່ສຸດ, ອາເລັກຊັນເດຍໃນປະເທດເອຢິບທີສອງ ແລະອັນຕີໂອເຂຍນີ້ທີສາມ.

ກ. ກຸງໃດໃຫຍ່ທີ່ສຸດໃນຈັກກະພັດໂລມ? ______________________________

ຂ. ທີສອງເດ? ______________________________________________

ຄ. ແລະທີສາມ? ______________________________________________

**7** ກ. ເມືອງໃດສຳຄັນກວ່າ ອັນຕີໂອເຂຍ ຫຼື ກາຍຊາເລຍ? ______________________

ຂ. ອັນຕີໂອເຂຍເປັນເມືອງລຳດັບໃດໃນຈັກກະພັດໂລມ? ______________________

**8** ໃນເລື່ອງການເມືອງແລະເສດຖະກິດ ອັນຕີໂອເຂຍເປັນລຳດັບທີສາມໃນຈັກກະພັດໂລມ. ແລະອີກເປັນເມືອງທີ່ສຳຄັນ ເພາະເປັນທີ່ປົກຄອງຂອງແຂວງຊີເລຍ. ຍິ່ງກວ່ານັ້ນ ເປັນສະຖານ ທີ່ສຳຄັນຫຼາຍໃນການແຜ່ຂ່າວປະເສີດຂອງພະເຢຊູ ມີ 4 ປະການເລີ້ມຕົ້ນໃນຄຼິດສະຕະຈັກໃນ ອັນຕີໂອເຂຍ. ໃຫ້ອ່ານ ກຈກ 11:19-21

ກ. ໃນຂໍ້ 19 ກ່ອນນັ້ນເຂົາກ່າວພະທຳໃຫ້ແຕ່ສະເພາະພວກໃດ? __________________

ຂ. ແຕ່ໃນຂໍ້ 20 ແລະ 21 ເຂົາເລີ້ມຕົ້ນກ່າວພະທຳກັບຊາວເກາະໃດ? ______________

ແລະ ______________________________________________

ຄ. ແລະ ຕໍ່ຊາວໃດອີກເໝືອນກັນ? ______________________________

ຄືປະກາດຕໍ່ຄົນຕ່າງຊາດທົ່ວໄປ!

**9** ເປໂຕກ່າວພະທຳຂອງພະເຈົ້າໃນເມືອງກາຍຊາເລຍ ເພິ່ນກ່າວກັບບຸກຄົນໂດຍສະເພາະ ແຕ່ບໍ່ ແມ່ນວ່າເຂົາຈະກ່າວໃຫ້ ຄົນຕ່າງຊາດໂດຍທົ່ວໄປ.

ກ. ເຂົາເລີ້ມຕົ້ນປະກາດພະທຳໃຫ້ຄົນຕ່າງຊາດທົ່ວໄປຟັງໃນເມືອງໃດ? _____________

ຂ. ມີຈັກຄົນທີ່ຕ່າວຄືນມາຫາພະອົງ? ______________________________

**10** ກ. ໃນ ກຈກ ບົດທີ 6 ເຮົາຮຽນມາແລ້ວວ່າມີການຜິດຖຽງກັນລະຫວ່າງພວກທີ່ປາກພາສາກະ ລິກກັບພວກທີ່ປາກພາສາ ເຮັບເລີ. ໃນ ກຈກ 6:1 ນັ້ນ ພວກທີ່ປາກພາສາກະລິກບໍ່ແມ່ນຄົນ ຕ່າງຊາດ. ເຂົາເປັນຄົນຢິວທີ່ຍ້າຍມາຈາກ ປະເທດ ອື່ນ ໆ ຈຶ່ງຍັງປາກພາສາໃດ? _____

ຂ. ແຕ່ສ່ວນຄົນທີ່ເຫັນໃນກິດຈະການບົດທີ 11 ນີ້ບໍ່ແມ່ນຊາດຢິວ ແຕ່ເປັນຊາວກະລິກທີ່ມາ ຈາກຫຼາຍບ່ອນ. ພວກຄົນ ທີ່ ປາກພາສາກະລິກໃນ ກຈກ ບົດທີ 11 ນີ້ ເຊື້ອສາຍໃດແທ້?

______________________________________________

**11** ກ. ທີ່ອ້າງເຖິງພວກທີ່ປາກພາສາກະລິກໃນ ກຈກ ບົດ 6 ທີ່ຈິງເປັນເຊື້ອສາຍໃດ? ________

ຂ. ເປັນຫຍັງເຂົາປາກພາສາກະລິກ? ________________________________

ຄ. ແຕ່ຄົນທີ່ຮັບເຊື່ອໃນ ກຈກ ບົດ 11 ເປັນຊາວໃດ? ________________________

**12** ການປະກາດພະທຳຕໍ່ຄົນຕ່າງຊາດທີ່ເລີ້ມຕົ້ນໃນອັນຕີໂອເຂຍເປັນແນວໃດ? (ເລືອກ)

ກ. ______ ການປະກາດທົ່ວໄປຈົນເຖິງວັນນີ້

ຂ. ______ ການປະກາດທີ່ຢຸດເປັນບາງເວລາ

ຄ. ______ ການປະກາດແຕ່ເທື່ອດຽວ

**13** ກ. ແມ່ນໃນອັນຕີໂອເຂຍ ທີ່ເຂົາເລີ້ມຕົ້ນປ່າວປະກາດທົ່ວໄປຕໍ່ພວກໃດ? ____________

ຂ. ໃນ ກຈກ 11:26 ເປັນເທື່ອທຳອິດທີ່ພວກລູກສິດຖືກເອີ້ນວ່າເປັນຢ່າງໃດ? __________

**14** ພວກຄຼິດສະຕຽນຊາວຢິວໃນກຸງເຢລູຊາເລັມ ບໍ່ພໍໃຈໃນເລື່ອງທີ່ຄົນຕ່າງຊາດມາເຊື່ອພະອົງໃນອັນຕີໂອເຂຍ. ເຊັ່ນ ດຽວ ກັນ ແຕ່ກ່ອນເຂົາກໍບໍ່ພໍໃຈທີ່ຊາວຊາມາເລຍເຂົ້າມາເຊື່ອໃນພະອົງ.

ກ. ເມື່ອເຫັນຊາວຊາມາເລຍຫຼາຍຄົນມາເຊື່ອຟັງຄຳເທດສະໜາຂອງຟີລິບ ຄຼິດສະຕະຈັກໃນກຸງເຢລູຊາເລັມໃຊ້ ສອງຄົນໃດໄປ? ________________ ແລະ ______________

ຂ. ເມື່ອເຫັນຊາວກະລິກຫຼົບຕັ້ງໃຈໃໝ່ໃນອັນຕີໂອເຂຍ ເຂົາໃຊ້ຜູ້ໃດໄປ? (ກຈກ 11:22)

______________________________________________________

**15** ກ. ບາລະນາບາເຫັນລູກສິດຊາວຕ່າງປະເທດແລ້ວເປັນຢ່າງໃດ? (ກຈກ 11:23) (ເລືອກ)

______ ຕໍ່ຕ້ານ

______ ປິຕິຍິນດີ

______ ບໍ່ຮູ້ຈະຄິດແນວໃດ

______ ປະເຂົາໄວ້ກັບໄປກຸງເຢລູຊາເລັມ



ຂ. ບາລະນາບາເຫັນຄຼິດສະຕຽນໃໝ່ໃນອັນຕີໂອເຂຍແລ້ວໄປເຮັດຫຍັງ? (ກຈກ 11:25) ___________________

___________________________________

**16** ໂຊໂລບໍ່ຢູ່ອັນຕີໂອເຂຍແລ້ວ

ກ. ໂຊໂລເປັນໄທເມືອງໃດ? (ກຈກ 9:11) ______________________________

ຂ. ອອກຈາກກາຍຊາເລຍແລ້ວ ໂຊໂລໄປໃສ? (ກຈກ 9:30) ___________________

ຄ. ໃຫ້ກັບໄປເບິ່ງແຜນທີ່ໜ້າປົກບົດນີ້. ທ່າເຮືອທີ່ໃກ້ກັບເມືອງອັນຕີໂອເຂຍຢູ່ເມືອງໃດ? ___

**17** ບາລະນາບາໄປຫາໂຊໂລຢູ່ໃສ? ____________________________________




**18** ໃຫ້ທ່ານເບິ່ງແຜນທີ່ຂ້າງຂວາແລ້ວຕອບຄຳຖາມຕໍ່ໄປນີ້:

ກ. ເລກໃດໝາຍເມືອງຕາໂຊ? ____________

ຂ. ເລກໃດໝາຍເມືອງກາຍຊາເລຍ? ____________

ຄ. ເລກໃດໝາຍເມືອງອັນຕີໂອເຂຍ? ____________

ງ. ເລກໃດໝາຍເມືອງຫຼວງຂອງແຂວງຊີເລຍ? ____________

ຈ. ເລກໃດໝາຍເມືອງຫຼວງຂອງແຂວງຢູດາຕາມ ການປົກຄອງຂອງໂລມ? ____________

ສ. ເລກໃດໝາຍບ່ອນທີ່ໂຊໂລໄປໜີພົ້ນຫຼັງຈາກ ເປັນຄຼິດສະຕຽນ? ____________

ຊ. ເລກໃດໝາຍເຖິງເມືອງທີ່ບາລະນາບາໄປຊອກຫາໂຊໂລ? ____________

ຍ. ເລກໃດໝາຍເຖິງບ່ອນທີ່ບາລະນາບານຳພາໂຊໂລມາເພື່ອໃຫ້ສັ່ງສອນຫຼາຍຄົນ? ______

**19** ກ. ບາລະນາບາໄປຊອກຫາໃຜ? ____________

ຂ. ຊອກຫາຢູ່ໃສ? ____________

ຄ. ເອົາມາເພື່ອຫຍັງ? ____________

*ເຫດການນັ້ນແຫຼະເປັນບາດກ້າວທີ່ສຳຄັນຫຼາຍໃນປະຫວັດຄຼິດສະຕະຈັກ!*

**20** ກ. ເມືອງອັນຕີໂອເຂຍເປັນທີ່ຈັກກະພັດໂລມປົກຄອງແຂວງໃດ? ____________

ຂ. ອັນຕີໂອເຂຍເປັນເມືອງລຳດັບໃດໃນຈັກກະພັດໂລມ? ____________

ຄ. ບາລະນາບາໄປຫາໃຜມາສອນຄຼິດສະຕຽນໃໝ່ຢູ່ອັນຕີໂອເຂຍ? ____________

**21** ກ. ເຂົາເລີ້ມຕົ້ນປ່າວປະກາດພະທຳທົ່ວໄປໃຫ້ພວກໃດໃນເມືອງອັນຕີໂອເຂຍ? ________

ຂ. ເຂົາເລີ້ມຕົ້ນເອີ້ນລູກສິດຂອງພະອົງວ່າຢ່າງໃດໃນເມືອງອັນຕີໂອເຂຍ? ____________

**22** ມີອີກຈຳພວກໜຶ່ງທີ່ລົງຈາກກຸງເຢລູຊາເລັມໄປເມືອງອັນຕີໂອເຂຍ.
(ໃຫ້ອ່ານ ກຈກ 11:27-28)

ກ. ເຂົາຈະໄປເຮັດຫຍັງ? ____________

ຂ. ຄົນຜູ້ໜຶ່ງໃນພວກນັ້ນຊື່ຫຍັງ? ____________

ຄ. ເພິ່ນທຳນວາຍວ່າຢ່າງໃດ? ____________

**23** ດັ່ງນັ້ນ ຄຼິດສະຕະຈັກໃນເມືອງອັນຕີໂອເຂຍລົງມືຕຽມຕົວໄວ້ກ່ອນ.
(ໃຫ້ອ່ານ ກຈກ 11:29-30)



ກ. ພວກລູກສິດມີເຈຕະນາເຮັດຫຍັງ? ____________

ຂ. ຝາກໄປໃສ? ____________

ຄ. ຝາກກັບໃຜ? ____________

**24** ໃນພະທຳກິດຈະການແລະຕະຫຼອດທົ່ວໄປໃນຈົດໝາຍຂອງອາຈານໂປໂລ ເຫັນວ່າຄຼິດສະຕະຈັກຄົນຕ່າງປະເທດເປັນ ຫ່ວງກັບພວກຄຼິດສະຕຽນໃນແຂວງຢູດາແລະກຸງເຢລູຊາເລັມ. ເຂົາຖືວ່າເປັນອັນໜຶ່ງອັນດຽວກັນໃນພະເຢຊູ. ແມ່ນຄຼິດ ສະຕະຈັກໃດທີ່ເລີ້ມຕົ້ນໃນການບໍລິຈາກໃຫ້ຄຼິດສະຕຽນຜູ້ທີ່ຍາກຈົນ? ____________________________________________

**25** ມາເຖິງນີ້ ເຮົາຮຽນເລື່ອງ 3 ປະການທີ່ເລີ້ມຕົ້ນໃນຄຼິດສະຕະຈັກອັນຕີໂອເຂຍຄື: (ໃຫ້ຕື່ມຄວາມທີ່ຂາດ)

ກ. ເລີ້ມຕົ້ນ ______________________ ໃຫ້ ______________________ ທົ່ວໄປ.

ຂ. ພວກ __________ ໄດ້ຖືກເອີ້ນວ່າ __________ ເປັນເທື່ອທຳອິດຢູ່ __________

ຄ. ເຂົາບໍລິຈາກຕາມກຳລັງ ຝາກໄປຊ່ວຍ______________________________ ອື່ນ ໆ.

**26** ແຕ່ສິ່ງທີ່ສຳຄັນທີ່ສຸດທີ່ເລີ້ມຕົ້ນໃນຄຼິດສະຕະຈັກອັນຕີໂອເຂຍຄື ເຂົາເລີ້ມຕົ້ນສົ່ງຜູ້ປະກາດໄປເຖິງທີ່ສຸດປາຍແຜ່ນດິນ ໂລກ ຕາມຄຳສັ່ງຂອງພະເຊຊູ. ໃຫ້ອ່ານ ກຈກ 13:1-4.

ກ. ຄຼິດສະຕະຈັກຢູ່ອັນຕີໂອເຂຍຕັ້ງສອງຄົນໃດໄວ້ ສຳລັບການປະກາດທີ່ພະວິນຍານເອີ້ນໃຫ້ເຮັດ?__________________________ ແລະ ________________________

ຂ. ເຂົາໄປທາງບົກ ຫຼືທາງນ້ຳ? ________________________________________

**27** ກິດຈະການ ບົດທີ 23 ເຖິງ 28 ລາຍງານແຕ່ເລື່ອງທີ່ອາຈານໂປໂລໄປປ່າວປະກາດພະທຳໃຫ້ຄົນທົ່ວໂລກຟັງ. ການນີ້ ເປັນປະການທີ 4 ທີ່ເລີ້ມຕົ້ນໃນຄຼິດສະຕະຈັກເມືອງໃດ? _______

**28** ໃນບ່ອນຫວ່າງຕໍ່ໄປນີ້ ໃຫ້ທ່ານຈົດເຫດການ 4 ປະການທີ່ເລີ້ມຕົ້ນໃນຄຼິດສະຕະຈັກອັນຕີໂອເຂຍ.

ກ. ____________________________________________________________

ຂ. ____________________________________________________________

ຄ. ເຂົາບໍລິຈາກ ________________________________________ (ຕື່ມຄວາມຂາດ)

ງ. ຂົາເລີ້ມຕົ້ນຕັ້ງຄົນໄປ ____________________________________________



**29** ອາຈານໂປໂລເດີນທາງໄປປ່າວປະກາດທັງໝົດ 3 ຮອບ. ທຸກຮອບນັ້ນມີສ່ວນກ່ຽວຂ້ອງກັບຄຣິດສະຕະຈັກອັນຕີໂອເຂຍ

ກ. ຮອບທຳອິດເພິ່ນຈາກໃສໄປ? (ກຈກ 13:1 ແລະ 4) ________________________

ຂ. ກັບມາເຖິງໃສ? (ກຈກ 14:26) ______________________________________

ຄ. ຮອບທີສອງອາຈານໂປໂລຂຶ້ນທາງຈາກໃສໄປ? (ກຈກ 15:35-36) _____________

ງ. ຫຼັງຈາກຈອດທີ່ເມືອງກາຍຊາເລຍ ໂປໂລລົງໄປເມືອງໃດ? (ກຈກ 18:22) _________

ຈ. ໂປໂລພັກຢູ່ໃສກ່ອນຈະອອກໄປຜ່ານແຂວງຄາລາເຕຍ ແລະຟີເຄຍຄືຂຶ້ນທາງເທື່ອທີສາມ? (ກຈກ 18:22-23) ____________________________________________

ສ. ມີແຕ່ຮອບສຸດທ້າຍນີ້ທີ່ໂປໂລບໍ່ໄດ້ກັບມາອັນຕີໂອເຂຍ. ເພິ່ນຖືກຈັບໃນກຸງເຢລູຊາເລັມ ແລ້ວໄປກາຍຊາເລຍ ເລີຍ ຖືກສົ່ງໄປເປັນນັກໂທດທີ່ຜູກກັບໂສ້.
ໂປໂລຖືກຈັບໃນເມືອງໃດ? _____________________________________

**30** ທຸກເທື່ອທີ່ໂປໂລເດີນທາງໄປປ່າວປະກາດ ເພິ່ນຂຶ້ນທາງຈາກເມືອງດຽວ.

ກ. ຂຶ້ນທາງຈາກເມືອງໃດ? __________________________________________

ຂ. ມີແຕ່ຮອບດຽວທີ່ເພິ່ນບໍ່ໄດ້ກັບມາອັນຕີໂອເຂຍຄືຮອບໃດ? ___________________

ຄ. ເປັນຫຍັງເພິ່ນຈຶ່ງກັບມາບໍ່ເຖິງ? _____________________________________

ງ. ຖືກຂັງໄວ້ດາວໜຶ່ງຢູ່ໃສ? ____________________________________________

ຈ. ສຸດທ້າຍເຂົາສົ່ງໂປໂລໄປໃສ? ________________________________________

**31** ພະທຳກິດຈະການແບ່ງອອກເປັນ 3 ຂອບເຂດປ່າວປະກາດ. ກຈກ ບົດທີ 13 ເຖິງ 28 ລາຍງານເລື່ອງຂອບເຂດ ທີ 3.

ກ. ໃຈຄວາມສຳຄັນຂອງພະທຳກິດຈະການຢູ່ໃນບົດໃດຂໍ້ໃດ? ___________________

ຂ. ຕາມຂໍ້ພະຄຳພີນັ້ນ ການປະກາດໃນພະທຳກິດຈະການຈະແບ່ງເປັນຈັກຂອບເຂດ? ____

**32** ໃຫ້ອ່ານ ກຈກ 1:8 ອີກ ການປະກາດພະທຳຕາມໃນພະທຳ ກິດຈະການແບ່ງເປັນ 3 ຂອບເຂດໃດ? (ຕື່ມຄວາມ)

ກ. ໃນກຸງ _____________________________________________________

ຂ. ຕະຫຼອດທົ່ວ ___________________________ ກັບ ____________________

ຄ. ຈົນເຖິງ _____________________________________________________

**33** ກ. ກຈກ 1:4 ເລີ້ມຕົ້ນເລື່ອງການປ່າວປະກາດໃນເຂດໃດ? ______________________

ຂ. ກຈກ 8:1 ໃນຂອບເຂດໃດ? _________________________________________

ຄ. ກຈກ 13:1-2 ເປີດເລື່ອງການປ່າວປະກາດຕາມຂອບເຂດໃດ? ________________

**34** ບົດໃດແດ່ໃນພະທຳກິດຈະການ ບັນທຶກເລື່ອງການປ່າວປະກາດ.

ກ. ໃນກຸງເຢລູຊາເລັມ? ______________________ ເຖິງ ____________________

ຂ. ໃນແຂວງຢູດາແລະຊາມາເລຍ? ___________________ ເຖິງ ________________

ຄ. ເຖິງທີ່ສຸດປາຍແຜ່ນດິນໂລກ? ____________________ ເຖິງ _________________

**35** ໃຫ້ທ່ານຂຽນເຫດການ 4 ປະການທີ່ເລີ້ມຕົ້ນໃນຄຼິດສະຕະຈັກອັນຕີໂອເຂຍ.

ກ. ________________________________________________________________

ຂ. ________________________________________________________________

ຄ. ________________________________________________________________

ງ. ________________________________________________________________

**36** ກ. ເຢລູຊາເລັມເປັນສູນກາງສຳຄັນໃນການປ່າວປະກາດພະທຳຈາກ ກິດຈະການບົດໃດເຖິງ ບົດໃດ? ________________________________________________________

ຂ. ກາຍຊາເລຍເປັນສູນກາງສຳຄັນໃນການປະກາດພະທຳເຖິງສອງແຂວງໃດ? (ຕາມປະຫວັດ ຢືວ) ______________________________ ແລະ _________________________

ຄ. ອັນຕີໂອເຂຍແລະຕໍ່ໄປກຸງໂລມເປັນສະຖານທີ່ສຳຄັນໃນການປ່າວປະກາດໄປເຖິງໃສ?

________________________________________________________________




**37** ແຜນທີ່ທັງ 3 ໃບນີ້ ປຽບກັບ 3 ຂອບເຂດທີ່ປ່າວປະກາດຈາກພະທຳກິດຈະການ. ໃຫ້ທ່ານເບິ່ງ ແຕ່ລະແຜນທີ່ດີ ໆ ແລ້ວຕອບຄຳຖາມດັ່ງຕໍ່ໄປນີ້ເປັນການຮຽນຄືນ.

<u>ເຂດທີ 1</u>

ກ. ຈະປ່າວປະກາດໄປໃສ? ______________________________________________

ຂ. ລາຍງານໃນພະທຳກິດຈະການບົດໃດແດ່? _________________________________

ຄ. ສະຖານທີ່ສຳຄັນຄືກຸງໃດ? ___________________________________________

<u>ເຂດທີ 2</u>

ງ. ຈະປ່າວປະກາດໄປໃສ? ____________________ ແລະ ___________________

ຈ. ລາຍງານໃນພະທຳກິດຈະການບົດໃດແດ່? _________________________________

ສ. ໃນຊ່ອງຫວ່າງຕໍ່ໄປນີ້ ໃຫ້ທ່ານຂຽນສະຖານທີ່ໃນແຂວງຢູດາແລະຊາມາເລຍ ທີ່ຟີລິບ ເປໂຕ ແລະ ໂປໂລ ໄປປ່າວ ປະກາດຕາມແຜນທີ່ກາງນັ້ນ. (ລຳດັບໃດກໍໄດ້)

ທາງໄປ ______________________ ______________________

______________________ ______________________

______________________ ______________________

______________________

ຊ. ເຖິງວ່າ ພະທຳກິດຈະການເນັ້ນຄຳເລື່ອງການປະກາດພະທຳໃນແຂວງຢູດາແລະຊາມາເລຍ ແຕ່ເຫັນວ່າມີການ ປ່າວປະກາດໄປນອກຈາກສອງແຂວງນີ້ດ້ວຍ. ໃຫ້ທ່ານຕິດຕາມລູກສອນຈ້ຳເມັດເພື່ອສັງເກດອີກສອງເມືອງ ນອກຈາກສອງແຂວງໃນແຜນທີ່ກາງ. ໃຫ້ຈົດສອງເມືອງທີ່ຢູ່ນອກແຂວງຢູດາແລະຊາມາເລຍ.

9______________________ ແລະ ______________________

<u>ເຂດທີ 3</u>

ຍ. ຈະປ່າວປະກາດໄປໃສ? ______________________

ດ. ລາຍງານໄວ້ໃນກິດຈະການບົດໃດແດ່? ______________________

ຕ. ອາຈານໂປໂລເດີນທາງຈາກໃສໄປປ່າວປະກາດ 3 ເທື່ອ? ______________________

ຖ. ຜົນສຸດທ້າຍເພິ່ນປະກາດໄປເຖິງສູນກາງຈັກກະພັດຄືກຸງໃດ? ______________________

**38** ກຈກ ບົດ 1-7 ບັນທຶກເລື່ອງການຕັ້ງສູນກາງປ່າວປະກາດໃນກຸງເຢລູຊາເລັມແລະສິ້ນສຸດໃນກຸງເຢລູຊາເລັມດ້ວຍ.

ກ. ກິດຈະການ 8-12 ບັນທຶກເລື່ອງການຕັ້ງສູນກາງປ່າວປະກາດຢູ່ເມືອງໃດ? __________

ສຳເລັດໂດຍການປ່າວປະກາດໃນສອງແຂວງໃດ? __________ ແລະ __________

ຂ. ກິດຈະການ 13-28 ບັນທຶກເລື່ອງການຕັ້ງສູນກາງປ່າວປະກາດໃນສອງກຸງໃດ?

______________________ ແລະ ______________________

ຈະສຳເລັດໂດຍການປ່າວປະກາດເຖິງໃສ? ______________________

*ໃຫ້ເປີດບົດເສັງທີ 21!*

**ຄຳຕອບ:**

**1** *ອັນຕີໂອເຂຍ*

**2** *ອັນຕີໂອເຂຍ*

**3** *ກ. ຄາສາ ຂ. ຕີໂລ ຢົບເປ ໂດນ ກາຍຊາເລຍ ອັນຕີໂອເຂຍ ຕາໂຊ*

**4** *ກ. ກາຍຊາເລຍ ຂ. ຢົບເປ ຄ. ຕີໂລ ແລະ ຊີໂດນ ງ. ຄາສາ ຈ. ຕາໂຊ ສ. ອັນຕີໂອເຂຍ*

**5** *ອັນຕີໂອເຂຍໃຫຍ່ກວ່າ*

**ຄຳຕອບ (ຕໍ່):**

**6** *ກ. ກຸງໂລມ ຂ. ອາເລັກຊັນເດຍ ຄ. ອັນຕີໂອເຂຍ*

**7** *ກ. ອັນຕີໂອເຂຍ ຂ. ທີ 3*

**8** *ກ. ຢິວ ຂ. ກຸບໂລ ແລະ ກີເລເນ ຄ. ກະລີກ*

**9** *ກ. ອັນຕີໂອເຂຍ ຂ. ຫຼາຍຄົນ*

**10** *ກ. ພາສາກະລີກ ຂ. ກະລີກ*

**11** *ກ. ຢິວ ຂ. ເຂົາຍ້າຍມາຈາກປະເທດຕ່າງ ໆ ຄ. ຊາວກະລີກແທ້*

**12** *ກ ຖືກ*

**13** *ກ. ຄົນຕ່າງຊາດ ຂ. ຄຼິດສະຕຽນ*

**14** *ກ. ເປໂຕ ແລະ ໂຢຮັນ ຂ.ບາລະນາບາ*

**15** *ກ. ປິຕິຍິນດີ ຂ. ໄປເມືອງຕາໂຊເພື່ອຊອກຫາໂຊໂລ*

**16** *ກ. ຕາໂຊ ຂ. ຕາໂຊ ຄ. ຕາໂຊ*

**17** *ຕາໂຊ*

**18** *ກ. 1 ຂ. 3 ຄ. 2 ງ. 2 ຈ. 3 ສ. 1*
*ຊ. 1 ຍ. 2*

**19** *ກ. ໂຊໂລ ຂ. ຕາໂຊ ຄ. ສອນຄຼິດສະຕຽນໃໝ່ຢູ່ອັນຕີໂອເຂຍ*

**20** *ກ. ຊີເລຍ ຂ. ທີ 3 ຄ. ໂຊໂລ*

**21** *ກ. ຄົນຕ່າງຊາດ ຂ. ຄຼິດສະຕຽນ*

**22** *ກ. ປະກາດພະທຳ ຂ. ອາຄະໂບ ຄ. ຈະມີການອຶດຢາກຢ່າງໃຫຍ່ທົ່ວໂລກ*

**23** *ກ. ບໍລິຈາກຕາມກຳລັງ ຂ.ຂວງຢູດາ ຄ. ບາລະນາບາ ກັບ ໂຊໂລ*

**24** *ອັນຕີໂອເຂຍ*

**25** *ກ. ປ່າວປະກາດພະທຳ... ຄົນຕ່າງຊາດ ຂ. ລູກສິດ... ຄຼິດສະຕຽນ... ອັນຕີໂອເຂຍ*
*ຄ. ຄຼິດສະຕະຈັກ*

**26** *ກ. ບາລະນາບາ ແລະ ໂຊໂລ ຂ. ທາງນ້ຳ*

**27** *ອັນຕີໂອເຂຍ*

**28** *ກ. ເລີ້ມຕົນປ່າວປະກາດພະທຳ ໃຫ້ຄົນຕ່າງຊາດທົ່ວໄປ.*
*ຂ. ເລີ້ມຕົນເອີ້ນພວກລູກສິດ ວ່າເປັນຄຼິດສະຕຽນ.*
*ຄ. ຕາມກຳລັງ ຝາກໄປຊ່ວຍ ຄຼິດສະຕະຈັກອື່ນ ໆ.*
*ງ. ປະກາດພະທຳທົ່ວໂລກ*

**29** *ກ. ອັນຕີໂອເຂຍ ຂ. ອັນຕີໂອເຂຍ ຄ. ອັນຕີໂອເຂຍ ງ. ອັນຕີໂອເຂຍ*
*ຈ. ອັນຕີໂອເຂຍ ສ. ເຢລູຊາເລັມ*

**30** *ກ. ອັນຕີໂອເຂຍ ຂ. ທີ 3 (ສຸດທ້າຍ) ຄ. ເພິ່ນຖືກຈັບໃນກຸງເຢລູຊາເລັມ*
*ງ. ກາຍຊາເລຍ ຈ. ກຸງໂລມ*

**ຄໍາຕອບ (ຕໍ່):**

**31** *ກ. ກຈກ 1:8 ຂ. 3*

**32** *ກ. ເຢລູຊາເລັມ ຂ. ແຂວງຢູດາ ກັບ ແຂວງຊາມາເລຍ*
*ຄ. ທີ່ສຸດປາຍແຜ່ນດິນໂລກ*

**33** *ກ. ກຸງເຢລູຊາເລັມ ຂ. ແຂວງຢູດາ ແລະ ແຂວງຊາມາເລຍ*
*ຄ. ທີ່ສຸດປາຍແຜ່ນດິນໂລກ*

**34** *ກ. ບົດ 1 ເຖິງ 7 ຂ. ບົດ 8 ເຖິງ 12 ຄ. ບົດ 13 ເຖິງ 28*

**35** *ກ. ການປ່າວປະກາດພະທໍາໃຫ້ຄົນຕ່າງຊາດທົ່ວໄປ*
*ຂ. ທີ່ເຂົາເອີ້ນພວກລູກສິດວ່າເປັນຄຼິດສະຕຽນ*
*ຄ. ການບໍລິຈາກຕາມກໍາລັງຝາກໄປຊ່ວຍຄຼິດສະຕະຈັກອື່ນ*
*ງ. ການຕັ້ງຄົນໄປປ່າວປະກາດພະທໍາທົ່ວໂລກ*

**36** *ກ. ບົດ 1 - 7 ຂ. ຢູດາ ແລະ ຊາມາເລຍ ຄ. ທີ່ສຸດແຜ່ນດິນໂລກ*

**37** *ກ. ເຢລູຊາເລັມ ຊ. ດາມາເຊ ແລະ ອັນຕີໂອເຂຍ ຂ. ບົດ 1 - 7*
*ຍ. ທີ່ສຸດປາຍແຜ່ນດິນໂລກ ຄ. ເຢລູຊາເລັມ ດ. ບົດ 13 - 28*
*ງ. ຢູດາ ແລະ ຊາມາເລຍ ຕ. ອັນຕີໂອເຂຍ ຈ. ບົດ 8 - 12 ຖ. ໂລມ*
*ສ. ຄາສາ ກາຍຊາເລຍ ຊາມາເລຍ ຢົບເປ ລິດດາ*
*ອາໂຊໂຕ ເຢລູຊາເລັມ*

**38** *ກ. ກາຍຊາເລຍ ຢູດາ ແລະ ຊາມາເລຍ*
*ຂ. ອັນຕີໂອເຂຍ ແລະ ໂລມ ທີ່ສຸດປາຍແຜ່ນດິນໂລກ*